ການສະໄໝ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພັກປະຊາຊົນປະຕິວັດລາວ

ຄະນະພັກຄະນະໂຄສະນາອົບຮົມສູນກາງພັກ

ເລກທີ 43/ຄພ.ຄອສພ

ນະຄອນຫຼວງວຽງຈັນ, ວັນທີ 25/4/2023

**ແຜນການກະກຽມ**

**ດຳເນີນກອງປະຊຸມຄົບຄະນະການສະໄໝ**

**ຂອງຄະນະບໍລິຫານງານພັກຄະນະໂຄສະນາອົບຮົມສູນກາງພັກ**

- ອີງຕາມກົດລະບຽບຂອງພັກປະຊາຊົນປະຕິວັດລາວສະໄໝທີ XI;
- ອີງຕາມຄຳສັ່ງຂອງຄະນະເລຂາທິການສູນກາງພັກ ວ່າດ້ວຍການດຳເນີນກອງປະຊຸມຄົບຄະນະການສະໄໝຂອງຄະນະບໍລິຫານງານພັກແຕ່ລະຂັ້ນ ເລກທີ 268/ຄລສພ, ລົງວັນທີ 20 ມັງກອນ 2023;
- ອີງຕາມ ຄຳແນະນຳຂອງຄະນະຈັດຕັ້ງສູນກາງພັກ ວ່າດ້ວຍການຈັດຕັ້ງປະຕິບັດຄຳສັ່ງຂອງຄະນະເລຂາທິການສູນກາງພັກ ວ່າດ້ວຍການດຳເນີນກອງປະຊຸມຄົບຄະນະການສະໄໝຂອງຄະນະບໍລິຫານງານພັກແຕ່ລະຂັ້ນເລກທີ 25/ຄຈສພ, ລົງວັນທີ 24/01/2023;
- ອີງຕາມຄຳແນະນຳຂອງຄະນະກວດກາສູນກາງພັກ ສະບັບເລກທີ 74/ຄກສພ, ລົງວັນທີ 27/3/2023 ກ່ຽວກັບການກະກຽມດຳເນີນຊີວິດການເມືອງການສະໄໝ ຂອງຄະນະບໍລິຫານງານພັກແຕ່ລະຂັ້ນ.

**I. ຈຸດປະສົງ.**

- ເພື່ອເປັນການຕີລາຄາທົບທວນຄືນການນຳພາຈັດຕັ້ງປະຕິບັດບັນດາທິດທາງ, ເນື້ອໃນ, ຄາດໝາຍທີ່ກອງປະຊຸມໃຫຍ່ ຄັ້ງທີ V ຂອງອົງຄະນະພັກ ຄະນະໂຄສະນາອົບຮົມສູນກາງພັກ, ມະຕິກອງປະຊຸມໃຫຍ່ຂອງບັນດາໜ່ວຍພັກ ວາງອອກອັນໃດໄດ້ຮັບຜົນສຳເລັດ ແລະ ອັນໃດຍັງຄົງຄ້າງ ເພື່ອສືບຕໍ່ນຳພາປະຕິບັດໃຫ້ບັນລຸຜົນຕາມແຜນການທີ່ໄດ້ກຳນົດໄວ້.
- ເພື່ອກວດກາຄວາມຮັບຜິດຊອບການເມືອງຂອງບັນດາສະຫາຍໃນຄະນະບໍລິຫານງານພັກ, ຄະນະໜ່ວຍພັກ ຕໍ່ກັບການນຳພາລວມ ແລະ ຄວາມຮັບຜິດຊອບຂອງບຸກຄົນໃນຄະນະພັກ, ຄະນະໜ່ວຍພັກ ຕາມການແບ່ງງານ, ແບ່ງຄວາມຮັບຜິດຊອບ; ຊອກໃຫ້ເຫັນດ້ານຕັ້ງໜ້າທີ່ຈະເສີມຂະຫຍາຍ, ດ້ານອ່ອນຄົງຄ້າງ ທີ່ຈະຕ້ອງໄດ້ປັບປຸງແກ້ໄຂ; ເພື່ອຍົກສູງຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ການເມືອງຂອງແຕ່ລະສະຫາຍ; ປະຕິບັດຫຼັກການຕຳນິຕິຊົມຕົນເອງ ແລະ ຕິຊົມເຊິ່ງກັນ ແລະ ກັນພາຍໃນພັກ, ເພື່ອເພີ່ມທະວີຄວາມສາມັກຄີເປັນເອກະພາບພາຍໃນພັກ, ຍົກສູງຄວາມຮັບຜິດຊອບແລະຄວາມເປັນແບບຢ່າງນຳໜ້າຂອງຄະນະພັກ ເພື່ອເປັນໃຈກາງຫຼັກແຫຼ່ງໃຫ້ແກ່ການປັບປຸງກໍ່ສ້າງພັກໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນ.

**II. ເນື້ອໃນ.**

**✳ ເນື້ອໃນກອງປະຊຸມທາບທາມຄວາມໄວ້ວາງໃຈຕໍ່ບຸກຄົນໃນຄະນະບໍລິຫານງານພັກ.**

ການດຳເນີນກອງປະຊຸມທາບທາມຄວາມໄວ້ວາງໃຈຂອງສະມາຊິກພັກຕໍ່ບຸກຄົນໃນຄະນະພັກ, ຄະນະໜ່ວຍພັກ ໃຫ້ປະຕິບັດກ່ອນການດຳເນີນກອງປະຊຸມຈະໄດ້ເຜີຍແຜ່ເຊື່ອມຊຶມເອກະສານສຳຄັນຂອງຂັ້ນເທິງມີ:

1. ຄຳສັ່ງຂອງຄະນະເລຂາທິການສູນກາງພັກ ເລກທີ 268/ຄລສພ, ລົງວັນທີ 20 ມັງກອນ 2023.



CamScanner

2. ຄຳແນະນຳຂອງຄະນະຈັດຕັ້ງສູນກາງພັກ ເລກທີ 25/ຄຈສພ, ລົງວັນທີ 24 ມັງກອນ 2023.

3. ມະຕິຂອງກົມການເມືອງສູນກາງພັກ ວ່າດ້ວຍມາດຕະຖານຂອງພະນັກງານນຳພາຄຸ້ມຄອງ ເລກທີ 030/ກມສພ, ລົງວັນທີ 3 ມັງກອນ 2018 ແລະ ມາດຖານ, ຂໍ້ຫ້າມ, ສິດ, ໜ້າທີ່ຂອງຄະນະພັກແຕ່ລະຂັ້ນ ໃນກົດລະບຽບພັກສະໄໝທີ XI.

**✳ ເນື້ອໃນກອງປະຊຸມຄົບຄະນະບໍລິຫານງານພັກ, ຄະນະໜ່ວຍພັກກາງສະໄໝ.**

1. ສະຫຼຸບຕີລາຄາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ສະມາຊິກພັກ ຄັ້ງທີ V, ແຜນພັດທະນາວຽກງານໂຄສະນາອົບຮົມ 5 ປີ, ຕິດພັນກັບການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກກາງສະໄໝ, ການປະຕິບັດ 2 ວາລະແຫ່ງຊາດຂອງຂະແໜງການ ແລະ ທ້ອງຖິ່ນ ຢ່າງຮອບດ້ານ, ຖືກຕ້ອງ, ພາວະວິໄສ, ນັບທັງດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ, ສາເຫດ, ບົດຮຽນທີ່ຖອດຖອນໄດ້. ພ້ອມນັ້ນ, ກໍໃຫ້ກຳນົດວິທີການສືບຕໍ່ຈັດຕັ້ງປະຕິບັດບັນດາຄາດໝາຍສູ້ຊົນແຕ່ລະດ້ານຂອງອົງຄະນະພັກໃນຕໍ່ໜ້າ ໃຫ້ແທດເໝາະກັບຄວາມອາດສາມາດບົ່ມຊ້ອນ, ກຳລັງແຮງທີ່ມີ ແລະ ສາມາດປະຕິບັດໄດ້ (ສ່ວນໜ່ວຍພັກ ກໍ່ສະຫຼຸບຕີລາຄາການປະຕິບັດມະຕິກອງປະຊຸມໃຫຍ່ຂອງໜ່ວຍພັກຕົນ).

2. ສຳຫຼວດການນຳພາລວມ ຂອງຄະນະບໍລິຫານງານພັກ ໃຫ້ລົງເລິກຕີລາຄາຕໍ່ການນຳພາຄົ້ນຄວ້າ, ເຊື່ອມຊຶມ, ຜັນຂະຫຍາຍ, ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມໃຫຍ່ ຄັ້ງທີ V ຂອງອົງຄະນະພັກ ຄະນະໂຄສະນາອົບຮົມສູນກາງພັກ ໃນແຕ່ລະດ້ານ; ຕີລາຄາດ້ານຄຸນທາດການເມືອງ, ຄຸນສົມບັດສົມທຳປະຕິວັດ, ຄວາມເປັນແບບຢ່າງນຳໜ້າ ແລະ ຄວາມສາມັກຄີເປັນເອກະພາບ ຢູ່ພາຍໃນຄະນະພັກ, ຄວາມໄວ້ວາງໃຈຂອງສະມາຊິກພັກ, ພະນັກງານ ແລະ ຊັ້ນຄົນຕ່າງໆ ຕໍ່ການນຳພາຂອງຄະນະພັກ ແລະ ບຸກຄົນໃນຄະນະພັກ; ຕີລາຄາແບບແຜນນຳພາ ແລະ ວິທີເຮັດວຽກ (ສ່ວນໜ່ວຍພັກ ກໍ່ຕ້ອງມີບົດສຳຫຼວດການນຳພາລວມຂອງໜ່ວຍພັກ).

3. ທາບທາມຄວາມໄວ້ວາງໃຈຂອງສະມາຊິກພັກ ຕໍ່ບຸກຄົນໃນຄະນະບໍລິຫານງານພັກ, ຄະນະໜ່ວຍພັກກາງສະໄໝຜ່ານມາ ເພື່ອເປັນຂໍ້ມູນພື້ນຖານສຳຄັນ ໃນການເບິ່ງບັນຫາການຈັດຕັ້ງ ກໍ່ຄືໃຫ້ແຕ່ລະສະຫາຍຄະນະພັກມີບ່ອນອີງເພື່ອປັບປຸງກໍ່ສ້າງຕົນເອງ.

4. ສຳຫຼວດບຸກຄົນໃນຄະນະບໍລິຫານງານພັກ ແລະ ບຸກຄົນສະມາຊິກພັກ ໃຫ້ເລັ່ງໃສ່ຕີລາຄາຄຸນທາດການເມືອງ, ຄຸນສົມບັດສົມທຳປະຕິວັດ ແລະ ແບບແຜນດຳລົງຊີວິດ, ຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງ ທີ່ໄດ້ຮັບມອບໝາຍ, ດ້ານແບບແຜນ ແລະ ວິທີເຮັດວຽກ ພ້ອມທັງກຳນົດມາດຕະການ ແລະ ວິທີປັບປຸງແກ້ໄຂໃນຕໍ່ໜ້າ.

**III. ເປົ້າໝາຍເຂົ້າຮ່ວມ, ກຳນົດເວລາກອງປະຊຸມກາງສະໄໝຂອງຄະນະບໍລິຫານງານພັກສະໄໝທີ V.**

**1. ເປົ້າໝາຍເຂົ້າຮ່ວມ:**

- ຄະນະປະຈຳພັກ, ຄະນະບໍລິຫານງານພັກສະໄໝທີ V, ຫົວໜ້າ, ຮອງຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ.
- ຫົວໜ້າກົມ, ຮອງຫົວໜ້າກົມ, ທຽບເທົ່າກົມ, ເລຂາ, ຮອງເລຂາ ແລະ ຄະນະໜ່ວຍພັກ.
- ເລຂາຊາວໜຸ່ມ, ປະທານກຳມະບານ, ປະທານສະຫະພັນແມ່ຍິງ ຄອສພ.
- ຜູ້ຕາງໜ້າຈາກຄະນະຈັດຕັ້ງສູນກາງພັກ 2 ສະຫາຍ.
- ຜູ້ຕາງໜ້າຈາກຄະນະກວດກາສູນກາງພັກ 2 ສະຫາຍ.
- ເຊີນກົມການເມືອງສູນກາງພັກ ເຂົ້າຮ່ວມ ພ້ອມທັງໂອ້ລົມຕໍ່ກອງປະຊຸມ.

**2. ກຳນົດເວລາ ແລະ ສະຖານທີ່.**

- ກຳນົດເວລາກອງປະຊຸມທາບທາມ 1 ວັນ, ແຕ່ 8:00-16:00ໂມງຂອງວັນທີ 20/6/2023.



CamScanner

- ກຳນົດເວລາ 3 ມື້, ເວລາ 8:00- 16:00ໂມງຂອງວັນທີ 27-29/6/2023.
- ສະຖານທີ່ຫ້ອງປະຊຸມໃຫຍ່ຄອສພ (ຫຼັກ6)
- ສະຖານທີ່ປະຊຸມຂອງບັນດາໜ່ວຍພັກ ຢູ່ຫ້ອງປະຊຸມຊັ້ນ 5, ສ່ວນໜັງສືພິມປະຊາຊົນ, ວາລະສານອະລຸນໃໝ່, ຫ້ອງການສະພາທິດສະດີສູນກາງພັກ ແມ່ນຢູ່ຫ້ອງປະຊຸມແຕ່ລະບ່ອນ.

**IV. ເປົ້າໝາຍເຂົ້າຮ່ວມ ແລະ ກຳນົດເວລາກອງປະຊຸມກາງສະໄໝຂອງບັນດາໜ່ວຍພັກ.**

✳ ດຳເນີນກອງປະຊຸມກາງສະໄໝ ແລະ ດຳເນີນຊີວິດການເມືອງ.

- ໜ່ວຍພັກກົມຈັດຕັ້ງ-ພະນັກງານ 18-19/5/2023.
- ໜ່ວຍພັກກົມອົບຮົມ 22-23/5/2023.
- ໜ່ວຍພັກກົມໂຄສະນາ 24-26/5/2023.
- ໜ່ວຍພັກຫ້ອງການ 29-31/5/2023.
- ໜ່ວຍພັກກົມຂໍ້ມູນຂ່າວສານ ແລະ ຝຶກອົບຮົມ 5-6/6/2023.
- ໜ່ວຍພັກວາລະສານອະລຸນໃໝ່ 7-8/6/2023.
- ໜ່ວຍພັກຫ້ອງການສະພາທິດສະດີສູນກາງພັກ 9-12/6/2023.
- ໜ່ວຍພັກໜັງສືພິມປະຊາຊົນ 13-15/6/2023.
- ໜ່ວຍພັກກົມກວດກາ 16-19/6/2023.

**1. ດ້ານເນື້ອໃນ.**

- ປຶກສາລາຄາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຂອງໜ່ວຍພັກຕົນ ແລະ ທິດທາງແຜນການທ້າຍສະໄໝ.
- ປຶກສາຫຼວດການນຳພາລວມຂອງໜ່ວຍພັກຕົນ.
- ປຶກສາຫຼວດບຸກຄົນສະມາຊິກພັກພາຍໃນໜ່ວຍ.

**2. ເປົ້າໝາຍເຂົ້າຮ່ວມ.**

- ຫົວໜ້າກົມ, ຮອງຫົວໜ້າກົມ ແລະ ທຽບເທົ່າກົມ.
- ເລຂາ, ຮອງເລຂາ, ຄະນະໜ່ວຍພັກ ແລະ ສະມາຊິກພັກສົມບູນ, ສຳຮອງ ເຂົ້າຮ່ວມ.

**V. ວິທີຈັດຕັ້ງປະຕິບັດ.**

- ພາຍຫຼັງແຜນການ ແລະ ຂໍ້ຕົກລົງຄະນະຮັບຜິດຊອບໄດ້ຮັບຮອງແລ້ວ, ຄະນະຮັບຜິດຊອບປະຊຸມເພື່ອແບ່ງວຽກ, ມອບໝາຍໃຫ້ບຸກຄົນໄປຈັດຕັ້ງປະຕິບັດ.
- ຄະນະໜ່ວຍ ນຳເອົາແຜນການນີ້ເຜີຍແຜ່ໃຫ້ສະມາຊິກພັກພາຍໃນໜ່ວຍຂອງຕົນ ແລະ ມອບວຽກໃຫ້ຄະນະໜ່ວຍພັກ, ສະມາຊິກພັກໃຫ້ລະອຽດ ແລະ ຈັດຕັ້ງປະຕິບັດຕາມແຜນການນີ້ຢ່າງເຂັ້ມງວດ.
- ສ່ວນລາຍລະອຽດຕົວຈິງຈະດຳເນີນກອງປະຊຸມ ຕ້ອງສົ່ງບົດສະຫຼຸບການຈັດຕັ້ງປະຕິບັດມະຕິກອງປະຊຸມຂອງໜ່ວຍພັກ ແລະ ບົດສຳຫຼວດການນຳພາລວມ ໃຫ້ກົມຈັດຕັ້ງ-ພະນັກງານ ແລະ ກົມກວດກາ.

**VI. ງົບປະມານຮັບໃຊ້.**

ນຳໃຊ້ງົບປະມານຂອງຄະນະໂຄສະນາອົບຮົມສູນກາງພັກ ຮັບໃຊ້ກອງປະຊຸມເຊັ່ນ: ຄ່າເຈ້ຍ, ນ້ຳມຶກ ຫຼື ຄ່າອັດເອກະສານ, ຄ່າອາຫານຫວ່າງ, ປ້າຍຄຳຂວັນ, ນັກຂ່າວ ແລະ ຄ່າອຸປະກອນອື່ນໆ ທີ່ຈຳເປັນໃຫ້ແກ່ການຮັບໃຊ້ກອງປະຊຸມ ຕາມລະບຽບການຂອງກະຊວງການເງິນວາງອອກ.

**ຄະນະພັກຄະນະໂຄສະນາອົບຮົມສູນກາງພັກ**

**ເລຂາ**

ຄຳພັນ ເຜີຍຍະວົງ